ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
********◇********

ຫ້ອງວ່າການລັດຖະບານ
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ 114 /ຄຊກລ.ສຄ
ນະຄອນຫລວງວຽງຈັນ, ວັນທີ: 19 APR 2016

# ບົດບັນທຶກ ກອງປະຊຸມກຸ່ມວິຊາການ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 01, 2016

ກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 01, 2016 ໄດ້ໄຂຂຶ້ນ ໃນວັນທີ 23 ເດືອນ ມີນາ ປີ 2016, ເວລາ 09:00 ຢູ່ທີ່ຫ້ອງປະຊຸມຂອງຫ້ອງການ ຄຊກລ ໂດຍການເປັນ ປະທານຂອງ ທ່ານ ບຸນພະມິດ ໂສມວິຈິດ ຮອງຫົວໜ້າຫ້ອງການ, ຜູ້ຊີ້ນຳຝ່າຍປະຕິບັດງານ ຫ້ອງການ ຄຊກລ ໂດຍມີຕົວແທນຈາກອົງການປະຕິບັດງານ ແລະ ຄູ່ຮ່ວມງານຕ່າງໆ ລວມທັງພະນັກງານ ແລະ ວິຊາການຫ້ອງການ ຄຊກລ ເຂົ້າຮ່ວມຈຳນວນ: 18 ທ່ານ, ຍິງ 05 ທ່ານ.

ໃນການກ່າວໄຂກອງປະຊຸມ, ທ່ານປະທານກອງປະຊຸມໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມກຸ່ມວິຊາການ ແມ່ນກອງປະຊຸມເພື່ອແລກປ່ຽນສົນທະນາ, ປຶກສາຫາລືກ່ຽວກັບແນວທາງໃນການໂຄສະນາຜົນຮ້າຍຂອງ ລບຕ ໃຫ້ປະຊາຊົນເຂົ້າໃຈ ແລະ ສາມາດຫຼີກລ່ຽງ ການເກີດອຸປະຕິເຫດຈາກ ລບຕ, ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ແມ່ນມີຈຳນວນບໍ່ໜ້ອຍ ແລະ ບໍ່ແນ່ໃຈວ່າຈະໃຊ້ເວລາເທົ່າໃດໃນການເກັບກູ້ ສະນັ້ນ ພວກເຮົາຄວນ ເນັ້ນໃສ່ວຽກງານການໂຄສະນາ ເພື່ອບໍ່ໃຫ້ເກີດມີອຸປະຕິເຫດຈາກ ລບຕ.

ໃນກອງປະຊຸມ ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຫ້ອງການ ຄຊກລ ໄດ້ທົບທວນບົດບັນທຶກກອງປະຊຸມຄັ້ງທີ່ຜ່ານມາໂດຍຫຍໍ້, ສັງລວມແຜນວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃນປີ 2016 ທີ່ວຂະແໜງການການເຄື່ອນ ໄຫວວຽກປະຈຳໄຕມາດ 01 ປີ 2016 ແລະ ແຜນຄາດຄະເນ ໃນໄຕມາດ 02 ປີ 2016 ເຊິ່ງໃນນີ້ແມ່ນຈະຊຸມໃສ່: ຊຸກຍູ້ກະຊວງ ຖວທ ຈັດລາຍການວິທະຍຸ ເພື່ອໂຄສະນາຜົນຮ້າຍຂອງ ລບຕ ໃນ 4 ແຂວງ (ແຂວງຄຳມ່ວນ, ສາລະວັນ, ເຊກອງ ແລະ ຈຳປາສັກ), ຝຶກອົບຮົມ ອສບ 2 ແຂວງ.

ຕາງໜ້າຈາກບັນດາອົງການປະຕິບັດງານ ແລະ ຄູ່ຮ່ວມງານຕ່າງໆ ໄດ້ຜັດປ່ຽນກັນລາຍງານຜົນສຳເລັດໃນການ ປະຕິບັດວຽກງານຂອງຕົນໃນໄລຍະ 03 ເດືອນ ທີ່ຜ່ານມາ ແລະ ແຜນການເຄື່ອນໄຫວໃນໄຕມາດ 02, ປີ 2016 ໃນນີ້ ,ທ່ານຜູ້ຕາງໜ້າ ກົມອະນຸບານ ແລະ ປະຖົມສຶກສາ ກະຊວງສຶກສາທິການ ແລະ ກິລາ, ທ່ານຜູ້ຕາງໜ້າ ກົມພາລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ, ທ່ານຜູ້ຕາງໜ້າ ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ - ວັດທະນະທຳ ແລະ ທ່ອງທ່ຽວ, ທ່ານຜູ້ຕາງໜ້າ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ), ທ່ານຜູ້ຕາງໜ້າອົງການສາກົນເພື່ອຄົນພິການ, ທ່ານຜູ້ຕາງໜ້າອົງການ MAG, ທ່ານຜູ້ຕາງໜ້າອົງການ WEL ໂຄງການ ສຶກສາເລື່ອງລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ, ທ່ານຜູ້ຕາງໜ້າ ວຽກງານພິພັນຊຸມຊົນ ແລະ ວຽກງານ ໂຄສະນາສຶກສາ ຄວາມສ່ຽງໄພຈາກ ລບຕ ອົງການເກັບກູ້ລະເບີດຮາໂລເທັສ (Halo-Trust),ໄດ້ລາຍງານການເຄື່ອນໄຫວ ແລະ ແຜນວຽກ. ສ່ວນລາຍ ລະອຽດຂອງການເຄື່ອນໄຫວ ຂອງແຕ່ລະພາກສ່ວນ ພ້ອມດ້ວຍແຜນແມ່ນສາມາດ ເບິ່ງໄດ້ ໃນເອກະສານຊ້ອນ ທ້າຍ.

**ໃນກອງປະຊຸມ ຍັງໄດ້ສົນທະນາ ແລະ ປຶກສາຫາລືກັນໃນຫຼາຍຫົວຂໍ້ທີ່ໜ້າສົນໃຈ:**

ບ້ານສີສັງວອນ, ເມືອງໄຊເສດຖາ, ໂປສະນີ: 7261, ໂທ: (856-21) 262386, ແຟັກ : 262396,
ອີເມວ: uxo.nra@gmail.com, www.nra.gov.la

1. ອົງການກຸ່ມທີ່ປຶກສາດ້ານລະເບີດ MAG ໜ່ວຍງານພົວພັນຊຸມຊົນຂອງອົງການ MAG ໃນການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ແມ່ນໄດ້ປະຕິບັດຕາມລະບຽບ ແລະ ທິດຊີ້ນຳຂອງຫ້ອງການ ຄຊກລ ວາງອອກ. ເປັນຕົ້ນແມ່ນຂະບວນການລາຍງານ ຜົນສຳເລັດຂອງກິດຈະກຳດັ່ງກ່າວນັ້ນ ດ້ວຍລະບົບ IMSMA ແລະ ຂອດການປະສານງານກັບພາກລັດຖະບານ ຂັ້ນທ້ອງຖິ່ນແມ່ນໄດ້ຕິດຈອດກັບ ຫ້ອງການ ຄຊກລ ຫຼື ຫ້ອງການຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນແຂວງ ແລະ ອົງການປະຕິບັດງານດ້ວຍກັນ.

- ເພີ່ມກິດຈະກຳການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃນຊຸມຊົນຫຼາຍຂຶ້ນ ແລະ ອາສາສະໝັກບ້ານໃຫ້ຄວາມຮູ້ກ່ຽວກັບຜົນຮ້າຍ ແລະ ວິທີປ້ອງກັນອຸປະຕິເຫດຈາກ ລບຕ ໃຫ້ປະຊາຊົນໃນໝູ່ບ້ານຂອງເຂົາເຈົ້າແລະອສບ ບ້ານກໍ່ຕ້ອງໄດ້ນຳໃຊ້ແບບຟອມ IMSMA ເພື່ອລາຍງານຜົນສຳເລັດຂອງກິດຈະກຳດັ່ງກ່າວນັ້ນ.
- ຂໍແລກປ່ຽນປະສົບການຂອງ ອສບ ບ້ານ ໃນແຂວງຄຳມ່ວນ ແລະ ແຂວງຊຽງຂວາງ ໃນນີ້ມີ ອສບ ຈຳນວນ: 40 ທ່ານ, ຢູ່ເມືອງໄຊບົວທອງ ແລະ ມະຫາໄຊ ແຂວງຄຳມ່ວນ. ເຊິ່ງພວກກ່ຽວໄດ້ຮັບການຝຶກອົບຮົມໂດຍໂຄງການ WV ເປັນຜູ້ໃຫ້ທຶນສະໜັບສະໜູນອົງການ MAG ເກັບກູ້ລະເບີດນັ້ນ.ແຕ່ໂຄງການນີ້ແມ່ນສິ້ນສຸດແລ້ວໃນເດືອນກັນຍາ, ປີ 2015 ແລະ ມີຍັງມີ ອສບ ຈຳນວນ: 40 ທ່ານ, ຢູ່ເມືອງຜາໄຊ, ຄູນ ແລະ ໜອງແຮດ ແຂວງຊຽງຂວາງ. ເຊິ່ງໄດ້ຮັບການຝຶກອົບຮົມໂດຍໂຄງການ EU ເປັນຜູ້ໃຫ້ທຶນສະໜັບສະໜູນອົງການ MAG ເກັບກູ້ລະເບີດນັ້ນ. ແຕ່ໂຄງການນີ້ແມ່ນສິ້ນສຸດແລ້ວໃນ ເດືອນມີນາ, ປີ 2016 ນີ້. ສະນັ້ນ, ໃນອານາຄົດຕໍ່ໜ້າ ແມ່ນໃຜຈະ ເປັນສືບ ຕໍ່ຊຸກຍູ້ ພວກເຂົາເຈົ້າ ໃຫ້ມີ ຄວາມຍືນຍົງ?

2. ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ວຽກງານ ອສບ ບໍ່ໄດ້ເຄື່ອນໄຫວ ລໍຖ້າງົບປະມານ, ແຕ່ໃນໄຕມາດ 2 ປີ 2016 ມີແຜນການຝຶກອົບຮົມທົບທວນຄືນ ຂອງ ອສບ ໂດຍການສະໜັບສະໜູນຈາກ ຄກລ, ການຮ່ວມມືລະຫວ່າງ ຄຊກລ ແລະ ອົງການນ້ຳໃຈນັກກິລາ ໃນ 6 ເດືອນ ໃນປີ 2016.
3. ອົງການຮາໂລທລາສ ກິດຈະກຳຫຼັກແມ່ນວຽກງານໂຄສະນາສຶກສາຊຸມຊົນລົງບ້ານ ແລະ ໂຮງຮຽນທີ່ເປັນເປົ້າໝາຍ, ໄລຍະນີ້ແມ່ນລົງບ້ານເກົ່າຄືນໃໝ່.

4. ອົງການສາກົນເພື່ອຄົນພິການ HI ກິດຈະກຳຫຼັກແມ່ນສາຍໜັງໂຄສະນາໃຫ້ປະຊາຊົນຮັບຮູ້ເຖິງຜົນຮ້າຍຂອງ ລບຕ. ໄດ້ສາຍຮູບເງົາຫຼາຍໆເລື່ອງ ຮູບເງົາກໍ່ໄດ້ມາຈາກ ຄຊກລ, ຄກລ ແລະ ເຮັດກິດຈະກຳແຈກຂອງຂວັນໃຫ້ປະຊາຊົນ, ເຮັດກິດຈະກຳແບ່ງເປັນກຸ່ມເປົ້າໝາຍ ແຍກເພດ ແລະ ແຍກໄວ.

- ແຜນກິດຈະກຳຕໍ່ໄປແມ່ນໄດ້ຕິດຕັ້ງປ້າຍໂຄສະນາໃຫຍ່ໆ ເພື່ອສື່ເຖິງການໂຄສະນາເຖິງຜົນຮ້າຍຂອງ ລບຕ ແລະ ມີເບີໂທສາຍດ່ວນໃຫ້ໂທລາຍງານໄດ້.
- ເຮັດການປະເມີນສຳຫຼວດຄືນວ່າມີການຮັບຮູ້ໃນລະດັບໃດຫຼັງຈາກລົງໂຄສະນາເຮັດກິດຈະກຳແລ້ວ.

5. ອົງການເອັນເອັກດູເຄເຊັນ ການມາຝຶກ IMSMA ແມ່ນຄົນທີ່ບໍ່ໄດ້ເຮັດວຽກນີ້ ການລາຍງານກໍ່ບໍ່ຮູ້ວ່າຈະລາຍງານແນວໃດ, ການລາຍງານໄຕມາດກໍ່ບໍ່ສາມາດລາຍງານໄດ້ ເພາະວ່າຍັງບໍ່ໝົດໄຕມາດເທື່ອຕໍ່ບັນຫານີ້ ປະທານກອງປະຊຸມໄດ້ຊີ້ແຈງວ່າການລາຍງານກໍ່ໃຫ້ລາຍງານຕາມໂຮງຮຽນທີ່ໄດ້ເຄື່ອນໄຫວ,ເລື່ອງລາຍງານໄຕມາດກໍ່ສາມາດໃສ່ວັນທີໄດ້ວ່າວັນທີເທົ່າໃດຫາເທົ່າໃດ ຄັ້ງຕໍ່ໄປກໍ່ລາຍງານຕໍ່ຈາກຄັ້ງຜ່ານມາ.

6. ກົມອະນຸບານ ແລະ ປະຖົມ ກະຊວງສຶກສາທິການ ແລະ ກິລາ ການປະສານງານກັບຄູ່ຮ່ວມງານລະຫວ່າງອົງການສາກົນເພື່ອຄົນພິການຢູ່ແຂວງສະຫວັນນະເຂດໃນ 1 ປີ ຜ່ານມາ ຍັງມີຂໍ້ຫຍຸ້ງຍາກຫຼາຍໂດຍສະເພາະແມ່ນການດຳເນີນກິດຈະກຳແມ່ນເຮັດໄປເລີຍຍັງບໍ່ເຫັນແຜນລະອຽດ ແລະ ການແຈ້ງການຫາກະຊວງ ເພື່ອແຈ້ງຫາແຂວງຕາມຂັ້ນຕອນ.

-ຢາກໃຫ້ອົງການສາກົນເພື່ອຄົນພິການມາພົບພັນ ແລະ ປະຊຸມຮ່ວມກັນ ເພື່ອປຶກສາຫາລື, ຖອດຖອນບົດຮຽນໄລຍະຜ່ານມາ ແລະ ປຶກສາຮູບແບບການຈັດຕັ້ງປະຕິບັດໃນໄລຍະຕໍ່ໄປ ຈະພະຍາຍາມປະສານກັບທ້ອງຖິ່ນຄືນໃໝ່.

- ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພ ໄດ້ນຳສະເໜີຕໍ່ທີ່ປະຊຸມກ່ຽວກັບແບບຟອມເກັບກຳຂໍ້ມູນ IMSMA ຂອງວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ສະບັບປັບປຸງໃໝ່ ເຊິ່ງກອງປະຊຸມກໍ່ໄດ້ປຶກສາຫາລື ດັດປັບ ແລະ ເຫັນດີເອກະພາບແລ້ວໃນວັນທີ 23/3/2016. ຕໍ່ບັນຫານີ້ປະທານກອງປະຊຸມກໍ່ໄດ້ຊີ້ນຳໃຫ້ໜ່ວຍງານ

MRE ແຈ້ງແບບຟອມນີ້ຫາອົງການປະຕິບັດງານເພື່ອນຳໃຊ້ເປັນແບບຟອມລາຍງານນີ້ແທນສະບັບເກົ່າ.

**ໃນກອງປະຊຸມ ທ່ານປະທານກອງປະຊຸມຍັງໄດ້ຮຽກຮ້ອງ ແລະ ຊີ້ນຳ ຕໍ່ອົງການປະຕິບັດງານ:**

1 . ແຈ້ງໃຫ້ບັນດາອົງການປະຕິບັດງານເນັ້ນການໂຄສະນາອີງຕາມການເກີດອຸປະຕິເຫດຕົວຈິງ.

2. ຢາກສະເໜີໃຫ້ ຄກລ ຖ້າມີແຜນການເຄື່ອນໄຫວ ອສບ ແຕ່ອີງໃສ່ຄວາມຈຳກັດດ້ານງົບປະມານຖ້າມີຄວາມຈຳເປັນແທ້ໃຫ້ສົ່ງໜັງສືສະເໜີຫາ ຄຊກລ ເພື່ອເປັນບ່ອນອີງໃນການຄົ້ນຄວ້າຊ່ວຍ.

3. ວຽກ TOT ຢາກໃຫ້ອົງການ HI ໄປເບິ່ງຄືນສັນຍາທີ່ໄດ້ເຮັດນຳກະຊວງສຶກສາ, ໂຄງປະກອບຂອງທີມງານ, ຖ້າມີທີມງານໜ້ອຍຈະມີຜົນກະທົບຂອງການເຮັດວຽກ, ສະເພາະແຜນຕໍ່ໜ້າແມ່ນຕ້ອງໄດ້ເຮັດ, ຂະແໜງສຶກສາເປັນເຈົ້າການຊ່ວຍວິຊາສະເພາະດ້ານຄູ, ດີແທ້ແມ່ນພາກສ່ວນທີ່ກ່ຽວຂ້ອງລົງໄປຮ່ວມນຳ.

4. ການລາຍງານຂໍ້ມູນຂອງໝູ່ບ້ານ ແລະ ໂຮງຮຽນແມ່ນໃຫ້ເຮັດລະອຽດຈຳນວນບ້ານ ແລະ ໂຮງຮຽນ, ການລາຍງານຫາໜ່ວຍງານຖານຂໍ້ມູນ, ແມ່ນມີຄວາມຈຳເປັນແມ່ນໃຫ້ສະເໜີຫາໜ່ວຍງານຖານຂໍ້ມູນ, ແຕ່ການຄັດເລືອກຜູ້ທີ່ຈະມາຝຶກແມ່ນເລື່ອງພາຍໃນຂອງອົງການ ແຕ່ດີແທ້ຄວນແມ່ນຜູ້ເຮັດວຽກນີ້ໂດຍກົງຈຶ່ງຈະເປັນການດີ.

ທ່ານປະທານກອງປະຊຸມ ໄດ້ກ່າວຂອບໃຈ ແກ່ແຂກທີ່ເຂົ້າຮ່ວມໃນກອງປະຊຸມໃນຄັ້ງນີ້ ແລະ ກ່າວປິດກອງປະຊຸມຢ່າງເປັນທາງການໃນເວລາ 12:00 ໂມງຂອງວັນດຽວກັນ.

- ❖ **<u>ໝາຍເຫດ</u>:** ສຳລັບລາຍລະອຽດຂອງຜົນການເຄື່ອນໄຫວປະຕິບັດກິດຈະກຳ ແລະ ສະຖິຕິການເຄື່ອນໄຫວເຮັດວຽກໃນໄຕມາດ 01, 2016 ແລະ ແຜນວຽກໃນໄຕມາດ 02, 2016 ຂອງບັນດາອົງການປະຕິບັດງານ, ທ່ານສາມາດເບິ່ງໄດ້ໃນເອກະສານຄັດຕິດ.

**ປະທານກອງປະຊຸມ** **ບັນທຶກກອງປະຊຸມໂດຍ:**

ບຸນພະມິດ ໂສມວິຈິດ

Mr.Bounphamith SOMVICHITH